ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0274 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 06.02.2023

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນການສຶກສາລະດັບປະລິນຍາໂທ ສຳລັບປີ **2023** ພາຍໃຕ້ທຶນຂອງອົງການຮ່ວມມືສາກົນເກົາຫຼີ **(KOICA Scholarship Program 2023)**, ທີ່ ສ. ເກົາຫຼີ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການຂອງ ຫ້ອງການກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 118/ກຜທ. ກຮມ-ອປຮ.03, ລົງວັນທີ 13 ມັງກອນ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບທຶນການສຶກສາລະດັບປະລິນຍາໂທ ສຳລັບ ປີ 2023 ພາຍໃຕ້ທຶນຂອງອົງການຮ່ວມມືສາກົນເກົາຫຼີ (KOICA Scholarship Program 2023), ທີ່ ສ. ເກົາຫຼີ, ເຊິ່ງມີຈຳນວນ 12 ຫົວຂໍ້ ທີ່ຜູ້ສົນໃຈສາມາດເລືອກສະໝັກໄດ້ປະກອບມີ: ຫົວຂໍ້ທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ປ່າໄມ້ ແລະ ຫົວຂໍ້ທີ່ກ່ຽວຂ້ອງກັບວິຊາສະເພາະຂອງຕົນ, ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຫົວຂໍ້ | ມະຫາວິທະຍາໄລ |
|---|---|---|
| 1 | Economic Development | KDI (Korea Development Institute) |
| 2 | Asian Capacity Building for SDGs | Soul National University |
| 3 | Asian Civil Society Leadership | Ajou University |
| 4 | Asian Gender Leadership | Ewha Womans University |
| 5 | Global Fisheries Development | Pukyong National University |
| 6 | Techno-Entrepreneurship Competency Based on ICT Convergence | Handong Global University |
| 7 | Global Education Leadership | Korea National University of Education |
| 8 | Social Economic | KAIST |
| 9 | Response to Climate Change | Incheon National University |

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ 021 412347, 415368, 452455, E-mail doapmaf@gmail.com

| | | |
|---|---|---|
| 10 | Applied Artificial Intelligence (Major in Digital Innovation) | Hanyang University |
| 11 | Control of Infection Disease | Yonsei University |
| 12 | Digital Transformation Technology | Soongsil University |

ເງື່ອນໄຂ ແລະ ວິທີການສະໝັກ:

- ຜູ້ທີ່ຈະສະໝັກຕ້ອງເປັນພະນັກງານ-ລັດຖະກອນສົມບູນ 02 ປີຂຶ້ນໄປ;
- ຜູ້ສະໝັກຕ້ອງມີຄວາມຮູ້ພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;
- ຜູ້ສະໝັກຕ້ອງມີສຸຂະພາບແຂງແຮງ;
- ສໍາລັບແບບຟອມສະໝັກ ແລະ ລາຍລະອຽດຕ່າງໆຂອງທຶນສາມາດດາວໂຫຼດໄດ້ທີ່ ເວັບໄຊ https://koica.go.kr/sites/ciat/index.do ຫຼື ຕາມ QR Code ດ້ານລຸ່ມ, ສ່ວນລາຍລະອຽດເພີ່ມເຕີມໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກ ງານ: (ທ.ສົມເພັດອຸດອນ ດວງມາລາ) ໂທ: 021 415368, 020 52879569.

ພາຍຫຼັງທີ່ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມເພື່ອເຂົ້າຮ່ວມສະໝັກທຶນດັ່ງກ່າວແລ້ວໃຫ້ສົ່ງລາຍຊື່ພ້ອມແບບຟອມສະໝັກຕາມເງື່ອນໄຂຂອງອົງການຮ່ວມມືສາກົນເກົາຫຼີ(KOICA) ເຖິງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອສັງລວມສົ່ງໃຫ້ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ **21 ກຸມພາ 2023**.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ບຸນທະວີ ໄຊຍະເພັດ

ສໍາລັບແບບຟອມສະໝັກ

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ 021 412347, 415368, 452455, E-mail doapmaf@gmail.com